# ຮັບສະໝັກພະນັກງານຂັບລົດ

**ອົງການ GRET ແມ່ນກຳລັງຊອກຫາພະນັກງານຂັບລົດ 1 ຕຳແໜ່ງ ປະຈຳຢູ່ ເມືອງປາກແຊງ ແຂວງ ຫຼວງພະບາງ.**

| |
|---|
| **ຕຳແໜ່ງ:** ພະນັກງານຂັບລົດ<br>**ເວລາເຮັດວຽກ:** ເຕັມເວລາ<br>**ວັນທີ່ປິດຮັບສະໝັກ:** ວັນທີ 25 ເດືອນ ກຸມພາ ປີ 2026 |

**ໜ້າທີຮັບຜິດຊອບ:**

- ຂັບລົດໃຫ້ທີມງານຂອງໂຄງການຢ່າງປອດໄພຕາມເຂດພື້ນທີ່ການຈັດຕັ້ງປະຕິບັດໂຄງການ
- ບຳລຸງຮັກສາສະພາບຂອງຍານພາຫະນະ (ລົດໃຫຍ່+ລົດຈັກ)
- ກວດເຊັກສະພາບຍານພາຫະນະເປັນປະຈຳ ແລະ ລາຍງານບັນຫາທີ່ຕ້ອງການສ້ອມແປງ
- ບັນທຶກການເດີນທາງ ແລະ ສ້ອມແປງທຸກຄັ້ງໃສ່ໃນປື້ມບັນທຶກຍານພາຫະນະ (ລົດໃຫຍ່ ແລະ ລົດຈັກ)
- ປະຕິບັດຕາມກົດລະບຽບຈະລາຈອນ ແລະ ຂອງອົງການ GRET ວາງອອກຢ່າງເຄັ່ງຄັດ
- ຊ່ວຍອຳນວຍຄວາມສະດວກໃຫ້ແກ່ທີມງານດ້ານວຽກງານພະລາທິການ (ສຳຫຼັບການເດີນທາງໄປພາກສະໜາມ ເມືອງປາກແຊງ ຫາ ຕົວເມືອງອື່ນໆ).

**ຄຸນນະສົມບັດທີ່ຕ້ອງການ**

- ອາຍຸ 30 ປີ ຂຶ້ນໄປ
- ມີໃບຂັບຂີ່ຍານພາຫະນະປະເພດ AB ຂື້ນໄປ
- ມີປະສົບການໃນວຽກງານການຂັບລົດຢ່າງໜ້ອຍ 5 ປີ ຂຶ້ນໄປ, ເຄີຍມີປະສົບການເຮັດວຽກກັບອົງການຈັດຕັ້ງສາກົນ ຫຼື ໂຄງການກັບພາກລັດຖະບານຈະພິຈາລະນາເປັນພິເສດ.
- ມີປະສົບການໃນການຂັບຂີ່ຕາມຫົນທາງເຂດພື້ນທີ່ຊົນນະບົດ ແລະ ມີຄວາມຮູ້ກ່ຽວກັບກົດລະບຽບຈະລາຈອນເປັນຢ່າງດີ
- ສື່ສານເປັນພາສາລາວ (ຖ້າສື່ສານເປັນພາສາອັງກິດໄດ້ກໍ່ຍິ່ງເປັນການດີ)
- ມີຄວາມຮັບຜິດຊອບ ແລະ ຕົງຕໍ່ເວລາ
- ສາມາດເຮັດວຽກຕາມເວລາທີ່ຮ້ອງຂໍໄດ້.

**ສະຫວັດດີການ ທີ່ຈະໄດ້ຮັບ:**

ອົງການ GRET ຈະມີເງິນເດືອນ 13, ປະກັນໄພ, ກອງທຶນຝຶກອົບຮົມ ແລະ ສະຫວັດດີການອື່ນໆ

**ຂໍ້ມູນທີ່ຕ້ອງການຂອງຜູ້ສະໝັກ**

- ສຳຫຼັບຕຳແໜ່ງນີ້ ແມ່ນຮັບສະເພາະຜູ້ທີ່ມີສັນຊາດລາວ. ເງິນເດືອນແມ່ນຈະຂຶ້ນກັບທັກສະ ແລະ ປະສົບການ

**ອົງການ GRET ເປັນອົງການ ທີ່ໃຫ້ໂອກາດຢ່າງເທົ່າທຽມ ໂດຍບໍ່ທີການເລືອກປະຕິບັດຈາກເພດຫຼື ສາສະໜາ, ເຊື້ອຊາດ ຫຼື ສາເຫດອື່ນໆ ທີ່ອາດເປັນການເລືອກປະຕິບັດ. ຕຳແໜ່ງນີ້ແມ່ນເປີດກ້ວາງສຳຫຼັບບຸກຄົນທີ່ມີຄຸນສົມບັດຕາມທີ່ກຳນົດໄວ້. ການສະໝັກແມ່ນບໍ່ໄດ້ມີຄ່າໃຊ້ຈ່າຍໃດໆ ແລະ ບໍ່ມີຄ່າທຳນຽມໃດໆທີ່ເກັບກັບຜູ້ສະໝັກ.**

| |
|---|
| ຜູ້ສະໝັກທີ່ສົນໃຈສາມາດຍື່ນແບບຟອມສະໝັກວຽກ ພ້ອມໃບຢັ້ງຢືນປະສົບການການເຮັດວຽກຈາກຫ້ອງການອື່ນ) ມາໄດ້ທີ່<br>ອົງການ GRET ປະຈຳລາວ, ບ້ານສະພານທອງເໜືອ, ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ໂທ: 021 453 332<br>ທີ່ອີເມລ: phengkhamac.laos@gret.org ແລະ : laos@gret.org<br>**ຫຼື ສາມາດຕິດຕໍ່ຍື່ນເອກະສານສະໝັກງານໄດ້ທີ່ເບີ 020 56 536 364**<br>**ວັນທີ່ປິດຮັບສະໝັກ: 25 ເດືອນ ກຸມພາ ປີ 2026**<br>**ມີພຽງແຕ່ຜູ້ສະໝັກທີ່ຖືກການຄັດເລືອກເທົ່ານັ້ນທີ່ຈະໄດ້ຮັບການຕິດຕໍ່ເພື່ອເຂົ້າສຳພາດ** |